ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ: 0984 /ກວຕ

ນະຄອນຫຼວງວຽງຈັນ, ວັນທີ: 16 SEP 2016

## ຂໍ້ຕົກລົງ

## ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ມາດຕະຖານແຫ່ງຊາດ ກ່ຽວກັບຜະລິດຕະພັນໄມ້ແປຮູບທົ່ວໄປສຳລັບຮັບໃຊ້ການກໍ່ສ້າງ

- ອີງຕາມກົດໝາຍວ່າດ້ວຍມາດຕະຖານ (ສະບັບປັບປຸງ) ເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມບົດບັນທຶກ ກອງປະຊຸມຄະນະກຳມະການສະພາມາດຕະຖານແຫ່ງຊາດ, ສະບັບເລກທີ 0028/ສພຊ.ພມ ລົງວັນທີ 05 ກໍລະກົດ 2016;
- ອີງຕາມການສະເໜີຂອງປະທານສະພາມາດຕຖານແຫ່ງຊາດ ສະບັບເລກທີ 0029/ສພຊ.ພມ ລົງວັນທີ 05 ກໍລະກົດ 2016.

**ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

ມາດຕາ1. ເຫັນດີຮັບຮອງ ແລະ ປະກາດໃຊ້ມາດຕະຖານແຫ່ງຊາດ ກ່ຽວກັບຜະລິດຕະພັນໄມ້ແປຮູບທົ່ວໄປສຳລັບຮັບໃຊ້ການກໍ່ສ້າງ ສະບັບ ມລ 147-2016 ຢ່າງເປັນທາງການ.

ມາດຕາ2. ໃຫ້ຫ້ອງການ, ກົມ, ສະຖາບັນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ3. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ